# ສັງລວມຫຍໍ້ບັນດາຄຳຖະແຫຼງ ແລະ/ຫຼື ຂໍ້ສະຫງວນຂອງ ສປປ ລາວ ໃນສົນທິສັນຍາພະຫຸພາຄີທີ່ເກັບຮັກສາໄວ້ນຳເລຂາທິການໃຫຍ່ ຂອງອົງການສະຫະປະຊາຊາດ

ຕາຕະລາງຕໍ່ລົງໄປນີ້ແມ່ນບັນດາສົນທິສັນຍາທີ່ເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະ ຊາຊາດຊຶ່ງ ສປປ ລາວ ເປັນພາຄີໂດຍມີຂໍ້ສະຫງວນ ຫຼື ຄຳຖະແຫຼງ. ຂໍ້ສະຫງວນ ຫຼື ຄຳຖະແຫຼງຂອງລັດໃດໜຶ່ງເຮັດຂຶ້ນເພື່ອຫຼີບຫຼີກ ຫຼື ດັດແປງພັນທະຜູກມັດທາງກົດໝາຍຂອງບາງຂໍ້ ບັນຍັດໃນສົນທິສັນຍາທີ່ກ່ຽວຂ້ອງຕໍ່ລັດທີ່ເຮັດຂໍ້ສະຫງວນນັ້ນ. ຂໍ້ສະຫງວນຈະຊ່ວຍໃຫ້ລັດສາມາດຮັບເອົາສົນທິສັນຍາຫຼາຍຝ່າຍນັ້ນ ໄດ້ໂດຍອະນຸຍາດໃຫ້ລັດດັ່ງກ່າວບໍ່ຕ້ອງນຳໃຊ້ບາງຂໍ້ບັນຍັດທີ່ລັດນັ້ນບໍ່ຢາກປະຕິບັດຕາມ. ຂໍ້ສະຫງວນສາມາດເຮັດຂຶ້ນໄດ້ໃນເວລາລົງນາມ, ໃຫ້ສັດຕະຍາບັນ, ຮັບຮອງ, ເຫັນດີ ແລະ ເຂົ້າຮ່ວມເປັນພາຄີ, ເຖິງວ່າສັນຍາໃດໜຶ່ງອາດຈະຫ້າມການເຮັດຂໍ້ສະຫງວນ ຫຼື ພຽງແຕ່ອະນຸຍາດໃຫ້ເຮັດບາງຂໍ້ສະຫງວນ ເທົ່ານັ້ນ. ຂໍ້ສະຫງວນຈະຕ້ອງບໍ່ຂັດກັບຈຸດປະສົງ ແລະ ເປົ້າໝາຍຂອງສົນທິສັນຍາ.

| ລ/ດ | ອະພິສິດ ແລະ ສິດຄຸ້ມກັນ ການພົວພັນການທູດ/ກົງສຸນ ແລະ ອື່ນໆ | ການເຂົ້າຮ່ວມຂອງ ສປປ ລາວ[21] | ຂໍ້ສະຫງວນ/ຄຳຖະແຫຼງ |
|---|---|---|---|
| 1 | ສົນທິສັນຍາ ວ່າດ້ວຍ ອະພິສິດ ແລະ ສິດຄຸ້ມກັນຂອງສະຫະປະ ຊາຊາດ, 13 ກຸມພາ 1946. | (ຂ)<br>(ໂດຍມີຂໍ້ສະຫງວນ)<br>24 ພະຈິກ 1956 | 1/. ພົນລະເມືອງລາວທີ່ມີທີ່ຢູ່ຖາວອນ ຫຼື ທີ່ຢູ່ປະຈຳໃນປະເທດລາວຈະບໍ່ໄດ້ຮັບການຍົກເວັ້ນຈາກການເກັບພາສີອາກອນລາຍໄດ້ຈາກເງິນເດືອນ ແລະ ລາຍໄດ້.<br>2/. ພົນລະເມືອງລາວທີ່ເປັນພະນັກງານ ຂອງສະຫະປະຊາຊາດຈະບໍ່ໄດ້ຮັບການຄຸ້ມກັນຈາກພັນທະຮັບໃຊ້ຊາດ. |
| | ສິດທິມະນຸດ | ການເຂົ້າຮ່ວມຂອງ ສປປ ລາວ | ຂໍ້ສະຫງວນ/ຄຳຖະແຫຼງ |
| 2 | ສົນທິສັນຍາ ວ່າດ້ວຍ ການບໍ່ສິ້ນສຸດຂອງອາຍຸຄວາມອາຊະຍາກຳສົງຄາມ ແລະ ອາຊະຍາກຳຕ້ານມວນມະນຸດ, ນິວຢອກ, 26 ພະຈິກ 1968 | (ຂ)<br>(ໂດຍມີຄຳຖະແຫຼງ)<br>28 ທັນວາ 1984 | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເຂົ້າຮ່ວມສົນທິສັນຍາຂ້າງເທິງ ແລະ ຮັບຈະປະຕິບັດດ້ວຍຄວາມຈິງໃຈທຸກຂໍ້ບັນຍັດຂອງມາດຕາ V ແລະ VII ຂອງສົນທິສັນຍາ ວ່າດ້ວຍ ການບໍ່ສິ້ນສຸດຂອງອາຍຸຄວາມອາຊະຍາກຳສົງຄາມ ແລະ ອາຊະຍາກຳຕ້ານມວນມະນຸດ, ຊຶ່ງຖືກຮັບຮອງເອົາໂດຍສະມັດຊາໃຫຍ່ສະຫະປະຊາ ຊາດ, ໃນວັນທີ 26 ພະຈິກ 1968. ບັນດາຂໍ້ບັນຍັດເຫຼົ່ານີ້ຂັດກັບຫຼັກການແຫ່ງຄວາມສະ |

[21] ການລົງນາມ (ຊ), ການໃຫ້ສັດຕະຍາບັນ (ສ), ການເຂົ້າຮ່ວມເປັນພາຄີ (ຂ), ການຮັບຮອງ (ຮ), ການສືບທອດ (ສທ), ແຈ້ງການ (ຈ) ຍິນຍອມຢູ່ພາຍໃຕ້ການຜູກມັດທາງດ້ານກົດໝາຍ (ຍ).

| | | | |
|---|---|---|---|
| | | | ເໝີ ພາບທາງດ້ານອະທິປະໄຕຂອງບັນດາລັດ. ສົນທິສັນຍາດັ່ງກ່າວ ຄວນຈະເປີດຮັບການເຂົ້າຮ່ວມຂອງທຸກປະເທດໃນໂລກໂດຍສອດຄ່ອງກັບຈຸດປະ ສົງ ແລະ ຫຼັກການຂອງກົດບັດສະຫະປະຊາຊາດ. |
| 3 | ສົນທິສັນຍາ ວ່າດ້ວຍ ສິດທິທາງດ້ານການເມືອງ ແລະ ສິດຂອງພົນລະເມືອງ. ນິວຢອກ,16 ທັນວາ 1966 | (ສ)<br>(ໂດຍມີຂໍ້ສະຫງວນ ແລະ ຂໍ້ຖະແຫລງ)<br>25 ທັນວາ 2009 | ຂໍ້ສະຫງວນຂອງ ສປປ ລາວ: "ການນໍາໃຊ້ບົດບັນຍັດທີ່ກໍານົດໄວ້ໃນມາດຕາ 22 ຂອງສົນທິສັນຍາສະບັບດັ່ງກ່າວນັ້ນຕ້ອງສອດຄ່ອງກັບລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາຕ່າງໆ ຂອງ ສປປ ລາວ"; ຂໍ້ຖະແຫລງຂອງ ສປປ ລາວ: "ມາດຕາ 1 ຂອງສົນທິສັນຍາຈະຕ້ອງໄດ້ຮັບການຕີຄວາມໝາຍໂດຍສອດຄ່ອງກັບຖະແຫລງການວ່າດ້ວຍຫລັກການຂອງກົດໝາຍສາກົນ ກ່ຽວກັບ ການພົວພັນມິດຕະພາບ ແລະ ການພົວພັນລະຫວ່າງລັດຕາມກົດບັດ ສປຊ ທີ່ໄດ້ຖືກຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ຂອງອົງການ ສປຊ ໃນວັນທີ 24 ຕຸລາ 1970, ແລະທີ່ໄດ້ກໍານົດໄວ້ໃນຖະແຫລງການ ແລະ ແຜນປະຕິບັດງານກຸງວຽນ ຊຶ່ງໄດ້ຖືກຮັບຮອງເອົາໃນກອງປະຊຸມໂລກ ກ່ຽວກັບ ສິດທິມະນຸດໃນວັນທີ 25 ມິຖຸນາ 1993"; ແລະ "ມາດຕາ 18 ຂອງສົນທິສັນຍາສະບັບນີ້ ຈະບໍ່ຖືກຕີຄວາມໝາຍເພື່ອອະນຸຍາດ ຫລື ຊຸກຍູ້ໃຫ້ບຸກຄົນ ຫລື ກຸ່ມຄົນມີການກະທໍາທີ່ມີລັກສະນະບັງຄັບໂດຍທາງກົງ ຫລື ທາງອ້ອມເພື່ອໃຫ້ບຸກຄົນອື່ນໃດເຊື່ອຖື ຫລື ບໍ່ເຊື່ອຖື ຫລື ປ່ຽນສາສະ ໜາຂອງເຂົ້າເຈົ້າ. ການເຄື່ອນໄຫວທາງສາສະໜາເພື່ອຈຸດປະສົງແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າ ແລະ ສາສະໜາແມ່ນບໍ່ສອດຄ່ອງກັບມາດຕາ 18 ຂອງສົນທິສັນຍາສະບັບນີ້". |
| 4 | ອານຸສັນຍາເພີ້ມເຕີມໃຫ້ແກ່ສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບ ການເຂົ້າຮ່ວມ ຂອງເດັກໃນການປະທະກັນດ້ວຍກໍາລັງອາວຸດ, ນິວຢອກ, 25 ພຶດສະພາ 2000. | (ຂ)<br>(ໂດຍມີຂໍ້ຖະແຫລງ)<br>20 ຕຸລາ 2006 | ຂໍ້ຖະແຫລງ ຂອງ ສປປ ລາວ " ບົນພື້ນຖານມາດຕາ 3(2) ຂອງອານຸສັນຍາສະບັບນີ້ ສປປ ລາວ ຖະແຫລງວ່າ: ອີງຕາມກົດໝາຍຂອງ ສປປ ລາວ, ເກນອາຍຸຕໍ່າສຸດຂອງພົນລະເມືອງລາວ ທີ່ຈະໄດ້ຮັບອະນຸຍາດໃຫ້ສະໝັກເຂົ້າຮັບໃຊ້ໃນກອງກໍາລັງປະກອບອາວຸດແຫ່ງຊາດນັ້ນແມ່ນສິບແປດປີ. ກົດໝາຍວ່າດ້ວຍພັນທະປ້ອງກັນຊາດໄດ້ກໍານົດໄວ້ຢູ່ໃນມາດຕາ 3 ວ່າ: ພົນລະເມືອງລາວທຸກຄົນທີ່ເປັນຜູ້ຊາຍອາຍຸສິບແປດຫາຊາວສາມປີໃນກໍລະນີຕ້ອງການກໍອາດຈະຖືກຮຽກ |

| | | | |
|---|---|---|---|
| | | | ເຂົ້າຮັບໃຊ້ເປັນທະຫານພັນທະ; ແລະ ມາດຕາ 7 ວ່າ: ພາຍຫລັງກວດສຸຂະພາບແລ້ວ ຄະນະກຳມະການທະຫານພັນທະຂັ້ນເມືອງຈະເປັນຜູ້ຄັດເລືອກເອົາຜູ້ທີ່ມີສຸຂະພາບສົມບູນເຂົ້າເປັນທະຫານພັນທະຕາມຈຳນວນທີ່ທາງການໄດ້ກຳນົດໃຫ້ແຕ່ລະປີ. ໃນການຄັດເລືອກນັ້ນໃຫ້ເອົາຜູ້ມີອາຍຸສູງກວ່າໄປກ່ອນ". |
| 5 | ອານຸສັນຍາຂອງສົນທິສັນຍາ ວ່າດ້ວຍ ສິດທິເດັກ ກ່ຽວກັບ ການຄ້າເດັກ, ການຄ້າໂສເພນີເດັກ ແລະ ສິ່ງລາມົກອະນາຈານ ກ່ຽວກັບ ເດັກ, ນິວຢອກ, 25 ພຶດສະພາ 2000 . | (ຂ)<br>(ໂດຍມີຂໍ້ສະຫງວນ)<br>20 ຕຸລາ 2006 | ຂໍ້ສະຫງວນ ຂອງ ສປປ ລາວ: "ສປປ ລາວ ບໍ່ຖືວ່າຂໍ້ບັນຍັດຂອງມາດຕາ 5(2) ຂອງອານຸສັນຍາສະບັບນີ້ມີຜົນຜູກມັດສຳລັບ ສປປ ລາວ"; |
| | **ການຄ້າມະນຸດ** | **ການເຂົ້າຮ່ວມຂອງ ສປປ ລາວ** | **ຂໍ້ສະຫງວນ/ຄຳຖະແຫຼງ** |
| 6 | ສົນທິສັນຍາ ວ່າດ້ວຍ ການຄ້າ ແລະ ການຂູດຮີດການເປັນໂສເພນີຂອງຄົນອື່ນ, ເທລກຊັກແຊສ , ນິວຢອກ, 21 ມິຖຸນາ 1950 . | (ຂ)<br>(ໂດຍມີຂໍ້ສະຫງວນ)<br>14 ເມສາ 1978 | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ຖືວ່າຕົນຖືກຜູກມັດໂດຍຂໍ້ບັນຍັດຂອງມາດຕາ 22 ທີ່ກ່າວວ່າ: ການຂັດແຍ່ງ ລະຫວ່າງລັດພາຄີຂອງສົນທິສັນຍານີ້ ດ້ວຍກັນຊຶ່ງພົວພັນເຖິງການຕີຄວາມໝາຍ ຫຼື ການນຳໃຊ້ສົນທິສັນຍາຈະຕ້ອງນຳຂຶ້ນ ສານຍຸຕິທຳສາກົນຕາມການສະເໜີຂອງຝ່າຍໃດຝ່າຍໜຶ່ງໃນຂໍ້ຂັດແຍ່ງທີ່ກ່ຽວຂ້ອງ ໂດຍຄຳນຶງເຖິງສິດອຳນາດຂອງສານຍຸຕິທຳສາກົນ. ກ່ຽວກັບຂໍ້ຂັດແຍ່ງທີ່ພົວພັນເຖິງການຕີຄວາມໝາຍ ແລະ ການນຳໃຊ້ສົນທິສັນຍາດັ່ງກ່າວ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຖະແຫຼງວ່າບໍ່ວ່າຂໍ້ຂັດແຍ່ງໃດໆກໍຕາມທີ່ສະເໜີຕໍ່ສານຍຸຕິທຳສາກົນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍຂອງຄູ່ກໍລະນີ ໃນຂໍ້ຂັດແຍ່ງນັ້ນ. |
| | **ການຕ້ານການສໍ້ລາດບັງຫລວງ** | **ການເຂົ້າຮ່ວມຂອງ ສປປ ລາວ** | **ຂໍ້ສະຫງວນ/ຄຳຖະແຫລງ** |
| 7 | ສົນທິສັນຍາ ສປຊ ວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ. | (ສ)<br>(ໂດຍມີຂໍ້ສະຫງວນ ແລະ ຂໍ້ຖະແຫລງ)<br>25 ທັນວາ 2009 | 1/.ຂໍ້ສະຫງວນຂອງ ສປປ ລາວ: "ໂດຍສອດຄ່ອງກັບວັກທີ 3, ມາດຕາ 66, ຂອງສົນທິສັນຍາອົງການສະຫະປະຊາຊາດ ວ່າດ້ວຍ ການຕ້ານການສໍ້ລາດບັງຫລວງ, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າວັກ 2, ມາດຕາ 66 ຂອງສົນທິສັນຍາສະບັບນີ້ ມີຜົນບັງຄັບ |

| | | | |
|---|---|---|---|
| | | | ໃຊ້ຕໍ່ ສປປ ລາວ. ສປປ ລາວ ຖະແຫລງອີກວ່າການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບ ການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາໄປແກ້ໄຂດ້ວຍວິທີການຕັດສິນໂດຍກຳມະການລະຫວ່າງຊາດ ຫລື ສົ່ງໄປຍັງສານຍຸຕິທຳສາກົນ ເພື່ອພິພາກສານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍ ທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ".<br>2/.ຂໍ້ຖະແຫລງຂອງ ສປປ ລາວ: ສປປ ລາວ ຖະແຫລງວ່າ ສປປ ລາວ ບໍ່ຖືວ່າສົນທິສັນຍາ ວ່າດ້ວຍການຕ້ານການສໍ້ລາດບັງຫລວງເປັນພື້ນຖານ ສຳລັບຈຸດປະສົງການສົ່ງຜູ້ຮ້າຍຂ້າມແດນ ໃນສ່ວນທີ່ກ່ຽວຂ້ອງກັບຄວາມຜິດຕ່າງໆທີ່ໄດ້ລະບຸໄວ້ໃນນັ້ນ. ສປປ ລາວ ຖືເອົາສົນທິສັນຍາສອງຝ່າຍເປັນພື້ນຖານສຳລັບການສົ່ງຜູ້ຮ້າຍຂ້າມແດນລະຫວ່າງ ສປປ ລາວ ກັບລັດພາຄີອື່ນໃນສ່ວນທີ່ກ່ຽວ ຂ້ອງກັບຄວາມຜິດທຸກຢ່າງ. |
| | **ການຕ້ານການກໍ່ການຮ້າຍ** | **ການເຂົ້າຮ່ວມຂອງ ສປປ ລາວ** | **ຂໍ້ສະຫງວນ/ຄຳຖະແຫລງ** |
| 8 | ສົນທິສັນຍາວ່າດ້ວຍຄວາມປອດໄພຂອງ ພະນັກງານສະຫະປະຊາຊາດ ແລະ ບຸກຄະລາກອນທີ່ພົວພັນກັບສະຫະປະຊາຊາດ. ນິວຢອກ,<br>9 ທັນວາ 1994. | (ຂ)<br>(ໂດຍມີຂໍ້ສະຫງວນ)<br>22 ສິງຫາ 2002) | ຂໍ້ສະຫງວນຂອງ ສປປ ລາວ: "ໂດຍອີງຕາມວັກ 2, ມາດຕາ 22 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 1 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບ ການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ". |
| 9 | ສົນທິສັນຍາສາກົນຕ້ານການຈັບເປັນຕົວປະກັນ, ນິວຢອກ, 17 ທັນວາ 1979. | (ຂ)<br>(ໂດຍມີຂໍ້ສະຫງວນ)<br>22 ສິງຫາ 2002) | ຂໍ້ສະຫງວນຂອງ ສປປ ລາວ: "ໂດຍອີງຕາມວັກ 2, ມາດຕາ 16 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 1 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບ ການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍ |

| | | | |
|---|---|---|---|
| | | | ທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ". |
| 10 | ສົນທິສັນຍາສາກົນ ວ່າດ້ວຍ ການປາບປາມການກໍ່ການຮ້າຍດ້ວຍການວາງລະເບີດ. ນິວຢອກ, 12 ພະຈິກ 1997. | (ຂ)<br>(ໂດຍມີຂໍ້ສະຫງວນ)<br>22 ສິງຫາ 2002) | ຂໍ້ສະຫງວນຂອງ ສປປ ລາວ: "ໂດຍອີງຕາມວັກ 2, ມາດຕາ 20 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 1 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ". |
| 11 | ສົນທິສັນຍາວ່າດ້ວຍການສະກັດກັ້ນ ແລະ ລົງໂທດອາຊະຍາກຳຕ້ານບຸກຄົນທີ່ໄດ້ຮັບການປົກປ້ອງໃນລະດັບສາກົນ ລວມທັງນັກການທູດ, ນິວຢອກ, 14 ທັນວາ 1973, | (ຂ)<br>(ໂດຍມີຂໍ້ສະຫງວນ)<br>22 ສິງຫາ 2002) | ຂໍ້ສະຫງວນຂອງ ສປປ ລາວ: "ໂດຍອີງຕາມວັກ 2, ມາດຕາ 13 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 1 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ". |
| | **ການຕ້ານອາຊະຍາກຳຂ້າມຊາດ** | **ການເຂົ້າຮ່ວມຂອງ ສປປ ລາວ** | **ຂໍ້ສະຫງວນ/ຄຳຖະແຫລງ** |
| 12 | ສົນທິສັນຍາ ສປຊ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ. ນິວຢອກ, 15 ພະຈິກ 2000, | (ຂ)<br>(ໂດຍມີຂໍ້ສະຫງວນ ແລະ ຂໍ້ຖະແຫລງ)<br>26 ກັນຍາ 2003. | 1/.ໂດຍອີງຕາມວັກ 3 (ກ), ມາດຕາ 16 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຈະບໍ່ຖືເອົາສົນທິສັນຍາສະບັບນີ້ເປັນພື້ນຖານດ້ານກົດໝາຍເພື່ອການຮ່ວມມື ກ່ຽວກັບ ການສົ່ງຜູ້ຮ້າຍຂ້າມແດນກັບລັດພາຄີອື່ນຂອງສົນທິສັນຍາສະບັບນີ້;<br>2/.ຂໍ້ສະຫງວນຂອງ ສປປ ລາວ: "ໂດຍອີງຕາມວັກ 3, ມາດຕາ 35 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງຂອງວັກ 2 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບ ການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກ |

| | | | |
|---|---|---|---|
| | | | ທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ”. |
| 13 | ອານຸສັນຍາວ່າດ້ວຍການຕ້ານການຜະລິດ ແລະ ການຄ້າຂາຍອາວຸດປືນທີ່ຜິດກົດໝາຍລວມທັງຊິ້ນສ່ວນ ແລະ ສ່ວນປະກອບຂອງອາວຸດດັ່ງກ່າວ, ນິວຢອກ, 31 ພຶດສະພາ 2001. | (ຂ) (ໂດຍມີຂໍ້ສະຫງວນ) 26 ກັນຍາ 2003). | ຂໍ້ສະຫງວນຂອງ ສປປ ລາວ: “ໂດຍອີງຕາມວັກ 3, ມາດຕາ 16 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 2 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ”. |
| 14 | ອານຸສັນຍາ ວ່າດ້ວຍ ການຕ້ານການລັກລອບນຳຄົນເຂົ້າເມືອງໂດຍທາງບົກ, ທະເລ ແລະ ທາງອາກາດ, ນິວຢອກ, 15 ພະຈິກ 2000. | (ຂ) (ໂດຍມີຂໍ້ສະຫງວນ) 26 ກັນຍາ 2003). | ຂໍ້ສະຫງວນຂອງ ສປປ ລາວ: “ໂດຍອີງຕາມວັກ 3, ມາດຕາ 20 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 2 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ”. |
| 15 | ອານຸສັນຍາ ວ່າດ້ວຍ ການຕ້ານ, ການປາບປາມ ແລະ ການລົງໂທດການຄ້າມະນຸດໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ນິວຢອກ, 15 ພະຈິກ 2000. | (ຂ) (ໂດຍມີຂໍ້ສະຫງວນ) 26 ກັນຍາ 2003). | ຂໍ້ສະຫງວນຂອງ ສປປ ລາວ: “ໂດຍອີງຕາມວັກ 3, ມາດຕາ 15 ຂອງສົນທິສັນຍາສະບັບນີ້, ສປປ ລາວ ຖະແຫລງວ່າຕົນບໍ່ຖືວ່າບົດບັນຍັດ ກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງຂອງວັກ 2 ຂອງມາດຕາທີ່ກ່າວມາຂ້າງເທິງນີ້ມີຜົນບັງຄັບໃຊ້ຕໍ່ ສປປ ລາວ; ສປປ ລາວ ຖະແຫລງອີກວ່າ ການນຳສະເໜີຂໍ້ຂັດແຍ່ງ ກ່ຽວກັບການຕີຄວາມໝາຍ ຫລື ການນຳໃຊ້ສົນທິສັນຍາ ຕໍ່ສານອະນຸຍາໂຕຕຸລາການສາກົນ ເພື່ອພິຈາລະນານັ້ນຈະຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກທຸກຝ່າຍທີ່ກ່ຽວຂ້ອງທີ່ເປັນຄູ່ກໍລະນີໃນຂໍ້ຂັດແຍ່ງນັ້ນ”. |

## ສະຫລຸບສັງລວມຫຍໍ້ ກ່ຽວກັບ ຄວາມຈຳເປັນຂອງ ສປປ ລາວ ທີ່ຈະຕ້ອງ ສົ່ງບົດລາຍງານຕາມສົນທິສັນຍາພະຫຸພາຄີດ້ານສິດທິມະນຸດ ທີ່ເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະຊາຊາດ

ຕາຕະລາງຕໍ່ລົງໄປນີ້ ແມ່ນບັນດາສົນທິສັນຍາພະຫຸພາຄີທີ່ເກັບຮັກສາ ໄວ້ນຳເລຂາທິການໃຫຍ່ສະຫະປະຊາຊາດ. ການປະຕິບັດສົນທິສັນຍາດັ່ງກ່າວແມ່ນຕິດຕາມກວດກາໂດຍຄະນະກຳມະການ ຫຼື ຮຽກວ່າ "ອົງກອນສົນທິສັນຍາ"[22]. ພື້ນຖານທາງດ້ານກົດໝາຍເພື່ອສ້າງຕັ້ງອົງກອນສົນທິສັນຍາ ນັ້ນ ແມ່ນລະບຸໄວ້ໃນບັນດາສົນທິສັນຍາດັ່ງກ່າວນັ້ນເອງ. ບັນດາອົງກອນສົນທິສັນຍາແມ່ນປະກອບດ້ວຍນັກຊ່ຽວຊານເອກະລາດ ທີ່ມີຄວາມສາມາດເປັນທີ່ຍອມຮັບໃນຂົງເຂດສິດທິມະນຸດ ຊຶ່ງຖືກເລືອກຕັ້ງໂດຍລັດພາຄີ. ໂດຍເຫັນດີປະຕິບັດຕາມບັນດາສົນທິສັນຍາເຫຼົ່ານີ້, ລັດພາຄີເຫັນດີເຂົ້າຮ່ວມພົບປະເຈລະຈາກັບອົງກອນສົນທິສັນຍາທີ່ກ່ຽວຂ້ອງ. ບັນດາລັດພາຄີຍອມຮັບພັນທະ ໃນການສົ່ງ "ບົດລາຍງານຂອງ ລັດປະຈຳໄລຍະ" ຊຶ່ງລາຍງານເຖິງມາດຕະການທາງດ້ານນິຕິບັນຍັດ, ຕຸລາການ, ບໍລິຫານ ແລະ ມາດຕະການອື່ນໆທີ່ໄດ້ດຳເນີນເພື່ອຮັບປະກັນການຊົມໃຊ້ສິດທິທີ່ບົ່ງໄວ້ໃນສົນທິສັນຍາ. ຕາມປົກກະຕິ, ອົງກອນສົນທິສັນຍາພິຈາລະນາບົດລາຍງານຂອງລັດ ໂດຍການຊ້ອງໜ້າຂອງຜູ້ຕາງໜ້າຂອງລັດຖະບານ ແລະ ປິດລົງດ້ວຍການຮັບຮອງເອົາ "ບົດສັງເກດມ້ວນທ້າຍ" ຫຼື "ຄຳເຫັນມ້ວນທ້າຍ".

| ລ/ດ | ສົນທິສັນຍາສິດທິມະນຸດ | ການເຂົ້າຮ່ວມ ຂອງ ສປປ ລາວ[23] | ບົດລາຍງານທີ່ ສປປ ລາວ ໄດ້ສົ່ງ | ບົດລາຍງານ ທີ່ ສປປ ລາວ ຕ້ອງສົ່ງ |
|---|---|---|---|---|
| 1 | ສົນທິສັນຍາ ວ່າດ້ວຍການກຳຈັດທຸກຮູບການຈຳແນກເຊື້ອຊາດ, ນິວຢອກ, 7 ມີນາ 1966[24] | (ຂ) 22 ກຸມພາ 1974 | 1. ບົດລ/ງທຳອິດ, ທີສອງ (ກຳນົດສົ່ງ 24/03/75) ສົ່ງແລ້ວໃນວັນທີ 09/01/1978<br><br>2. ບົດລ/ງທີສາມ, ສີ່ ແລະ ຫ້າ (ກຳນົດສົ່ງ 24/03/84, ສົ່ງແລ້ວໃນວັນທີ 19/06/1984).<br><br>3. ທົບທວນການປະຕິບັດສົນທິສັນຍາ ສົ່ງແລ້ວໃນວັນທີ 10/08/1992. | 6- 24/03/85<br>7- 24/03/87<br><br>8- 24/03/89<br>9- 24/03/91<br>10-24/03/93<br><br>11-24/03/95<br>12-24/03/97<br>13-24/03/99 |

22 ຄະນະກຳມະການສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳຊຶ່ງເປັນອົງກອນດູແລການຈັດຕັ້ງປະຕິບັດສົນທິສັນຍາສາກົນ ວ່າດ້ວຍ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ໄດ້ຖືກສ້າງຕັ້ງຂຶ້ນໂດຍຍັດຕິຂອງສະພາເສດຖະກິດສັງຄົມ.

23 ການລົງນາມ (ຊ), ການໃຫ້ສັດຕະຍາບັນ (ສ), ການເຂົ້າຮ່ວມເປັນພາຄີ (ຂ), ການຮັບຮອງ (ຮ), ການສືບທອດ (ສທ), ແຈ້ງການ (ຈ) ແລະ ຍິນຍອມຢູ່ພາຍໃຕ້ການຜູກມັດທາງດ້ານກົດໝາຍ (ຍ) .

24 ອົງກອນສົນທິສັນຍາ: ຄະນະກຳມະການ ວ່າດ້ວຍ ການຈຳກັດທຸກຮູບການຈຳແນກເຊື້ອຊາດ.

| | | | | |
|---|---|---|---|---|
| 2 | ສົນທິສັນຍາ ວ່າດ້ວຍ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ, ນິວຢອກ, 16 ທັນວາ 1966[25]. | (ຊ) 7 ທັນວາ 2000 | | 1-05/2009 |
| 3 | ສົນທິສັນຍາ ວ່າດ້ວຍ ສິດທິທາງດ້ານການເມືອງ ແລະ ສິດຂອງພົນລະເມືອງ. ນິວຢອກ, 16 ທັນວາ 1966[26]. | (ຊ) 7 ທັນວາ 2000 | | |
| 4 | ສົນທິສັນຍາ ວ່າດ້ວຍ ການຈຳກັດທຸກຮູບການຈຳແນກຕໍ່ແມ່ຍິງ, ນິວຢອກ 16 ທັນວາ 1966[27] . , | (ຊ) 17 ທັນວາ 1980<br>(ສ) 14 ສິງຫາ 1981 | | 1 - 13/09/82<br>2 - 13/09/86<br>3 - 13/09/90<br>4 - 13/03/94<br>5 - 13/09/98 |
| 5 | ສົນທິສັນຍາຕ້ານການທໍລະມານ ແລະ ການກະທຳ ຫຼື ການລົງໂທດອື່ນໆທີ່ໂຫດຮ້າຍປ່າເຖື່ອນ, ໄຮ້ມະນຸດສະທຳ ແລະ ເຊື່ອມຊາມ. ນິວຢອກ, 10 ທັນວາ 1984[28] | | | |
| 6 | ສົນທິສັນຍາ ວ່າດ້ວຍ ສິດທິຂອງເດັກນ້ອຍ. ນິວຢອກ, 20 ພະຈິກ 1989[29] . | (ຊ) 8 ພຶດສະພາ 1991 | 1- ບົດລ/ງທຳອິດ (ກຳນົດສົ່ງ 07/06/93) ສົ່ງແລ້ວໃນວັນທີ 18/01/1996. | 1 - 07/06/98 |

[25] ອົງກອນສົນທິສັນຍາ: ຄະນະກຳມະການວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ.

[26] ອົງກອນສົນທິສັນຍາ: ຄະນະກຳມະການສິດທິມະນຸດ.

[27] ອົງກອນສົນທິສັນຍາ: ຄະນະກຳມະການວ່າດ້ວຍການກຳຈັດການຈຳແນກແມ່ຍິງ.

[28] ອົງກອນສົນທິສັນຍາ: ຄະນະກຳມະການຕ້ານການທໍລະມານ.

[29] ອົງກອນສົນທິສັນຍາ: ຄະນະກຳມະການວ່າດ້ວຍສິດທິຂອງເດັກ.